ສາທາລະນະລັດປະຊາທິປະໄຕປະຊາຊົນລາວ.

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

*******************************************

ອົງການໄອຍະການປະຊາຊົນສູງສຸດ.

ເລກທີ 61 / ອອປສ

ນະຄອນຫຼວງວຽງຈັນ, ວັນທີ 04 / 12 / 2008

## *ຂໍ້ຕົກລົງ*

## ຂອງໄອຍະການປະຊາຊົນສູງສຸດວ່າດ້ວຍການ ຮັບຮອງແລະອະນຸມັດນໍາໃຊ້ລະບົບຂໍ້ມູນສະຖິຕິວຽກງານ ວິຊາການຂອງ ອົງການໄອຍະການປະຊາຊົນໃນທົ່ວປະເທດ.

==============================

ອີງຕາມ : ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນແຫ່ງ ສ ປ ປ ລາວ.

ອີງຕາມ : ມະຕິຕົກລົງຂອງສະພາແຫ່ງຊາດກ່ຽວກັບການເລືອກຕັ້ງໄອຍະການປະຊາຊົນສູງສຸດ ແຫ່ງ ສ ປ ປ ລາວ ສະບັບເລກທີ 09 / ສພຊ , ລົງວັນທີ 9 ມິຖຸນາ 2006.

ອີງຕາມ : ຄວາມຮຽກຮ້ອງຕ້ອງການຂອງວຽກງານ ດ້ານຂໍ້ມູນຂ່າວສານຂອງລະບົບ ອົງການໄອຍະການປະຊາຊົນໃນທົ່ວປະເທດໃນສະເພາະໜ້າ ແລະ ຍາວນານ .

ອີງຕາມ : ການຄົ້ນຄ້ວາເຫັນດີເປັນເອກະພາບຂອງກອງປະຊຸມຮ່ວມລະຫ່ວາງຄະນະນໍາກັບບັນດາກົມ ຂອງ ອົງການໄອຍະການປະຊາຊົນສູງສຸດຄັ້ງວັນທີ່ 28 / 10/ 2008 .

ອີງຕາມ : ການສະເໜີຂອງຫ້ອງການ ອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການນໍາໃຊ້ລະບົບຖານຂໍ້ມູນສະຖິຕິວຽກງານວິຊາການຂອງ ອົງການໄອຍະການປະຊາຊົນ .

## *ໄອຍະການປະຊາຊົນສູງສຸດຕົກລົງ*

*<u>ມາດຕາ</u>* 1 : ຮັບຮອງ ແລະ ອະນຸມັດນໍາໃຊ້ລະບົບຂໍ້ມູນສະຖິຕິຂອງລະບົບອົງການໄອຍະການປະຊາຊົນ

ເຊິ່ງປະກອບດ້ວຍດັ່ງນີ້ :

- ລະບົບຂໍ້ມູນສະຖິຕິວຽກງານວິຊາການກ່ຽວກັບຄະດີຂັ້ນລົບລ້າງ ແລະຣື້ຟື້ນ.
- ລະບົບຂໍ້ມູນສະຖິຕິວຽກງານວິຊາການກ່ຽວກັບຄະດີຂັ້ນອຸທອນ.
- ລະບົບຂໍ້ມູນສະຖິຕິວຽກງານວິຊາການກ່ຽວກັບຄະດີ ຂັ້ນຕົ້ນ .

*ມາດຕາ* 2 : ອົງການໄອຍະການປະຊາຊົນ ແລະ ອົງການໄອຍະການທະຫານທຸກຂັ້ນຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ຖືກຕ້ອງ .

*ມາດຕາ* 3 : ມອບໃຫ້ ຫ້ອງການອົງການ ໄອຍະການປະຊາຊົນ ສູງສຸດ ອອກບົດແນະນຳ ໃຫ້ ອົງການໄອຍະການປະຊາຊົນ ແລະ ອົງການໄອຍະການທະຫານ ທຸກຂັ້ນໃນການຈັດຕັ້ງປະຕິບັດລະບົບຖານຂໍ້ມູນສະຖິຕິວຽກງານວິຊາການຂອງລະບົບ ອົງການໄອຍະການ ປະຊາຊົນ ໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ .

*ມາດຕາ* 4 : ຂໍ້ຕົກລົງສະບັບນີ້ ມີຜົນສັກສິດບັງຄັບໃຊ້ນັບແຕ່ມື້ລົງເຊັນເປັນຕົ້ນໄປ ແລະ ປ່ຽນແທນ ຖານຂໍ້ມູນສະຖິຕິເກົ່າ (ລະບົບ 11 ຕົວເລກ)ທີ່ເຄີຍໄດ້ນຳໃຊ້ຜ່ານມາ.

**ໄອຍະການປະຊາຊົນສູງສຸດ.**

ອົງການໄອຍະການປະຊາຊົນສູງສຸດ

ສົມພັນ ແພງຄຳມີ